ການບໍລິການເຂົ້າແຊກແຊງໃນຂັ້ນເລີ້ມແຣກຂອງຣັດວໍຊິງຕັນແມ່ນຄວາມພະຍາຍາມທີ່ຖືກປະສານງານຊຶ່ງຖືກອູ້ມຊູໂດຍກົມການຮຽນຮູ້ຂັ້ນເລີ້ມແຣກ, ຫ້ອງການຫົວຫນ້າຫມວດຂອງການສຶກສາຫລວງ, ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ, ກົມອະນາມັຍ ແລະ ກົມການບໍລິການສຳລັບຄົນຕາບອດ.

ທີ່ຢູ່ແວບ໌ຂອງພວກເຮົາແມ່ນ:
**www.del.wa.gov/esit**

Washington State Department of
Early Learning

Early Support
for Infants
and Toddlers

DEL 11-003 LA (3/11)

**Family Health Hotline**
**1.800.322.2588**
711 (tty relay) • withinreachwa.org
a program of WithinReach



# ກະຣຸນາ ສອບຖາມ

## ເດັກນ້ອຍບໍ່ສາມາດລໍຖ້າໄດ້.

ຣາຍຣະອຽດມີໄວ້ໃຫ້ກ່ຽວກັບວ່າເດັກນ້ອຍແຕ່ກຳເນີດໄປເຖິງສາມປີຈະໃຫຍ່ສູງ ແລະ ຂະຫຍາຍຕົວແນວໃດ; ແລະ ຈະເຮັດແນວໃດຖ້າຫາກວ່າທ່ານມີຄວາມຂ້ອງໃຈ.

ກົມການຮຽນຮູ້ຂັ້ນເລີ້ມແຣກຂອງຣັດວໍຊິງຕັນ

## ໃນຖານະເປັນພໍ່ແມ່ທ່ານເປັນຄົນສຳຄັນທີ່ສຸດຢູ່ໃນຊີວິດຂອງລູກຂອງທ່ານ.

ເດັກນ້ອຍໃຫຍ່ສູງ ແລະ ປ່ຽນແປງຢ່າງວ່ອງໄວໃນຣະຫວ່າງສາມປີທຳອິດຂອງເຂົາເຈົ້າ. ໃຫ້ຄິດເຖິງລູກຂອງທ່ານ ແລະ ກ່ຽວກັບວ່າເຂົາເຈົ້າເຕີບໂຕໃຫຍ່ສູງແນວໃດ. ທ່ານຮູ້ຈັກລູກຂອງທ່ານດີທີ່ສຸດ. ທ່ານສັງເກດເຫັນສິ່ງຕ່າງໆເຊັ່ນວ່າລູກຂອງທ່ານຍິ້ມແນວໃດ ແລະ ເມື່ອໃດ, ລຸກຂຶ້ນ, ຍ່າງ, ເວົ້າ, ຫລື ຈັບຈອກນ້ຳແນວໃດ. ສິ່ງທີ່ທ່ານກຳລັງເຫັນຢູ່ແມ່ນວ່າລູກຂອງທ່ານເຕີບໂຕຜ່ານຜ່າຂັ້ນຕອນຈະເຣີນເຕີບໂຕຕ່າງໆແນວໃດ. ເມື່ອລູກມີການຊັກຊ້າໃນການຂະຫຍາຍຕົວ, ການບໍລິການກໍມີໄວ້ໃຫ້ທົ່ວຣັດ. **ໂຄງການອູ້ມຊູໃນຂັ້ນເລີ້ມແຣກສຳລັບເດັກທາຣົກ ແລະ ເດັກນ້ອຍຮຽນຍ່າງຂອງຣັດວໍຊິງຕັນ** ປະສານງານຄວາມພະຍາຍາມທົ່ວຣັດເພື່ອຈະຊ່ວຍຄອບຄົວໃຫ້ໄດ້ຮັບການບໍລິການທີ່ເຂົາເຈົ້າຕ້ອງການ.





## ຈະເຮັດແນວໃດຖ້າຫາກວ່າຂ້າພະເຈົ້າມີຄຳຖາມກ່ຽວກັບການຈະເຣີນເຕີບໂຕຂອງລູກຂອງຂ້າພະເຈົ້າ?

ໂທຫາສາຍດ່ວນຂອງ **ສາຍດ່ວນສຸຂະພາບຄອບຄົວ** ໄດ້ທີ່ **1.800.322.2588** ຫລື **711 TTY Relay** ສຳລັບຊື່ຂອງບ່ອນປະສານງານຊ່ວຍເຫລືອຄອບຄົວ **(FRC)** ຢູ່ໃນເຂດຂອງທ່ານ. ມັນມີ **FRCs** ຢູ່ໃນແຕ່ລະຄາວຕີ ຫລື ເຂດພູມີພາກ.ເຂົາເຈົ້າຈະຊ່ວຍເຫລືອທ່ານໃຫ້ໄດ້ຮັບການບໍລິການເຂົ້າແຊກແຊງຂັ້ນເລີ້ມແຣກທີ່ລູກຂອງທ່ານຕ້ອງການ. ທ່ານຍັງຈະສາມາດໂທຫາກົມອະນາມັຍທ້ອງຖິ່ນ ຫລື ຫມວດໂຮງຮຽນຂອງທ່ານໄດ້ອີກຄືກັນ.

ເວົ້ານຳຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານກ່ຽວກັບຄວາມຂ້ອງໃຈຂອງທ່ານ. ເຂົາເຈົ້າສາມາດເອົາການຄັດເລືອກເບິ່ງໃຫ້ ຫລື ແນະນຳບ່ອນຊ່ວຍເຫລືອບ່ອນອື່ນ. ຖ້າຫາກວ່າທ່ານບໍ່ມີປະກັນພັຍສຸຂະພາບ ແລະ ຕ້ອງການຣາຍຣະອຽດ ຫລື ຄວາມຊ່ວຍເຫລືອ, ໃຫ້ໂທຫາ **ສາຍດ່ວນສຸຂະພາບຄອບຄົວ** ຕາມເລກໂທຣະສັບທີ່ຖືກພິມຢູ່ຂ້າງເທິງນີ້. ທ່ານຍັງສາມາດໄດ້ຣາຍຣະອຽດເພີ້ມເຕີມໄດ້ອີກຄືກັນຈາກແວບໄຊທ໌ຂອງໂຄງການ **Early Support for Infants and Toddlers** ໄດ້ທີ່: **www.del.wa.gov/esit/**

ໃຫ້ເບິ່ງການເຕີບໂຕໃຫຍ່ສູງແລະ ການຂະຫຍາຍຕົວຂອງລູກຂອງທ່ານຢູ່ຂ້າງໃນ. ▶

# ກຳເນີດ ໄປເທິງ ສາມປີ

## ການຈະເຣີນເຕີບໂຕ & ການຂະຫຍາຍຕົວ

### ສາຍຕາ ລູກຂອງທ່ານ...

- ☐ ທຳການຕິດຕໍ່ທາງສາຍຕາ (ເບິ່ງໃນຕາຂອງທ່ານ)
- ☐ ຕິດຕາມນຳສິ່ງທີ່ເຫນັງຕີງດ້ວຍຕາຂອງລາວ
- ☐ ຍ່າງ ຫລື ຄານໂດຍບໍ່ຕຳກັບສິ່ງຂອງຢູ່ເລື້ອຍໆ
- ☐ ເບິ່ງຄົນ ແລະ ສິ່ງຂອງໂດຍບໍ່ຕ້ອງປິດຕາຂ້າງນຶ່ງ
- ☐ ຈັບສິ່ງຂອງໃນຣະຍະທາງທັມມະດາ (ຫລັງຈາກອາຍຸ 6 ເດືອນ)
- ☐ ຍ່າງ ຫລື ຄານໄດ້ຕາມສະບາຍຜ່ານເງົາ ຫລື ບ່ອນທີ່ເບິ່ງຄືແຕກຕ່າງ (ພົມ, ແຜ່ນປູພື້ນ)
- ☐ ເບິ່ງຄົນອື່ນ ແລະ ສິ່ງຂອງບໍ່ຕ້ອງເຮັດຕາສົມກັນ ຫລື ລັດກັນ (ຫລັງຈາກ 9 ເດືອນ)
- ☐ ມີຕາທີ່ແຈ້ງໃສ, ບໍ່ແດງ ຫລື ນ້ຳຕາຍ້ອຍ

### ການຟັງສຽງ ລູກຂອງທ່ານ...

- ☐ ສະແດງຄວາມຮູ້ຈັກສຽງຢູ່ໃນເຮືອນ (ໂທຣະສັບ, ເຄາະປະຕູ, ໂທຣະທັດ)
- ☐ ໃຊ້ສຽງທີ່ບໍ່ດັງເກີນໄປ ຫລື ບໍ່ຄ່ອຍເກີນໄປ
- ☐ ຫລິ້ນຂອງຫລິ້ນທີ່ເຮັດສຽງດັງ (ຂອງຫລິ້ນຕຳກັນ, ຣະຄັງ)
- ☐ ເຮັດສຽງນຳ (ຫລັງຈາກ 1 ປີ)
- ☐ ໃຊ້ຄຳເວົ້າທີ່ຈົບລົງດ້ວຍສຽງ ("ເຊີ" ຫລື "ອິງ") ຫລັງຈາກອາຍຸສອງປີ
- ☐ ເຮັດຕາມຄຳຊີ້ນຳປາກເປົ່າ
- ☐ ຮັກສາສຽງດັງປານກາງນຳໂທຣະທັດ ຫລື ວິທະຍຸ
- ☐ ຟັງເຣື່ອງນິທານ, ແຜ່ນສຽງ, ຫລື ໂທຣະທັດໂດຍປາສຈາກຄວາມຫຍຸ້ງຍາກ
- ☐ ເວົ້າອອກມາເພື່ອວ່າຄົນສ່ວນຫລາຍສາມາດເຂົ້າໃຈ (ຖ້າອາຍຸແກ່ກວ່າ 2-1/2 ປີ)

### ແຕ່ກຳເນີດຮອດ 3 ເດືອນ ລູກຂອງທ່ານ...

- ☐ ຍົກຫົວ ແລະ ເອິກຂອງລາວຂຶ້ນເວລານອນເຫມັບເຕັງທ້ອງຂອງລາວ
- ☐ ຕີງແຂນ ແລະ ຂາຂອງລາວໄດ້ຢ່າງງ່າຍໆ
- ☐ ຕິດຕາມການເຄື່ອນໄຫວຂອງທ່ານໂດຍການປິ່ນຫົວຂອງລາວໄປຂ້າງຊ້າຍຂ້າງຂວາ
- ☐ ຈັບເອົາເຕົ້ານົມ ຫລື ນົມແມ່ໄດ້ງ່າຍໆ ແລະ ດູດໄດ້ດີ
- ☐ ສະດຸ້ງຕົກໃຈ ແລະ ຮ້ອງໄຫ້ດ້ວຍສຽງດັງກະທັນຫັນ
- ☐ ຫລຽວເບິ່ງທ່ານ,ເບິ່ງຫນ້າທ່ານ
- ☐ ເຮັດສຽງຂັນ ຫລື ຍິ້ມແຍ້ມ
- ☐ ຍິ້ມຕອບໃສ່ເມື່ອທ່ານຍິ້ມໃສ່ ຫລື ເວົ້ານຳ
- ☐ ມິດງ່າຍໆເມື່ອຖືກປອບໃຈ

### 3 ຫາ 6 ເດືອນ ລູກຂອງທ່ານ...

- ☐ ຫລິ້ນນຳຕີນເວລານອນເຕັງຫລັງ
- ☐ ຍົກຫົວ ແລະ ເອິກລາວຂຶ້ນເວລາເອົາແຂນຄ້ຳຍາມນອນເຕັງທ້ອງຂອງລາວ
- ☐ ດຶງຫົວລາວໃຫ້ຕັ້ງຂຶ້ນ ແລະ ຕັ້ງຢູ່ໂດຍບໍ່ມີຫຍັງຊູ
- ☐ ປິ້ນຈາກທ້ອງໄປຫລັງ ແລະ ຫລັງໄປທ້ອງ
- ☐ ຫລິ້ນນຳມືຂອງລາວເອງໂດຍຈັບກັນໄປມາ
- ☐ ຢືຫາເຄື່ອງຫລິ້ນ
- ☐ ເກັບເອົາເຄື່ອງຫລິ້ນຂຶ້ນມາພາຍໃນຢືເຖິງໄດ້
- ☐ ປິ່ນຫົວຂອງລາວໄປຫາສຽງ
- ☐ ເຮັດສຽງແຕກຕ່າງກັນຫລາຍໆຢ່າງ
- ☐ ຫົວຂຶ້ນມາແຮງໆ
- ☐ ພະຍາຍາມສະແດງໃຫ້ເຫັນວ່າມັກ ຫລື ບໍ່ມັກ

### 6 ຫາ 12 ເດືອນ ລູກຂອງທ່ານ...

- ☐ ດຶງຕົນເອງເພື່ອຈະຢືນຂຶ້ນດ້ວຍຄວາມຊ່ວຍເຫລືອຫນ້ອຍນຶ່ງ
- ☐ ນັ່ງໂດຍບໍ່ຕ້ອງໄດ້ຊ່ອຍໃນເວລາຫລິ້ນເຄື່ອງຫລິ້ນ
- ☐ ປ່ຽນສິ່ງຂອງຈາກມືນຶ່ງໄປຫາອີກມືນຶ່ງ
- ☐ ປ້ອນຕົນເອງດ້ວຍອາຫານຈັບກິນ
- ☐ ທຳທ່າຍົກມືລາກ່ອນ
- ☐ ເຮັດໃຫ້ທ່ານຮູ້ຈັກຄວາມຕ້ອງການຂອງລາວດ້ວຍການເຫນັງຕີງ ແລະ ສຽງ
- ☐ ເຮັດສຽງເວົ້າຄືກັນ ("ບາ-ບາ", "ກາ-ກາ")
- ☐ ປ່ຽນຜຽນກັນເວລາຫລິ້ນນຳຜູ້ໃຫຍ່ (ການກະທຳ, ສຽງ, ຫລື ການສະແດງອອກມາທາງຫນ້າຕາ)
- ☐ ເຮັດໃຫ້ທ່ານຮູ້ຈັກວ່າລາວເຂົ້າໃຈຄຳຖາມງ່າຍໆ ("ເຈົ້າຢາກໄດ້ຕື່ມບໍ່?")
- ☐ ຮູ້ຈັກພໍ່ແມ່ອອກຈາກຄົນຕ່າງຫນ້າ

### 12 ຫາ 18 ເດືອນ ລູກຂອງທ່ານ...

- ☐ ຍ່າງຄົນດຽວ
- ☐ ເກັບເອົາສິ່ງຂອງນ້ອຍໆຂຶ້ນມາ (ຂະນາດເມັດຫມາກອາງຸ່ນ)
- ☐ ເອົາເຄື່ອງໃສ່ໃນແລະຖອກອອກຈາກກ່ອງ
- ☐ ເອົາສິ່ງນຶ່ງຢອງຂຶ້ນໃສ່ອີກສິ່ງນຶ່ງ
- ☐ ປ້ອນຕົນເອງດ້ວຍບ່ວງ
- ☐ ຈັບໄວ້ ແລະ ກິນນ້ຳຈາກຈອກໂດຍເຮັດເຮັ່ຽຫນ້ອຍນຶ່ງ
- ☐ ຊີ້ໃສ່ສິ່ງຂອງຫລາຍແນວ ຫລື ຮູບເວລາຮ້ອງຊື່ຂຶ້ນມາ
- ☐ ເວົ້າສອງ ຫລື ສາມຄຳເວົ້າແຕກຕ່າງນອກຈາກວ່າ "ມາມາ" ຫລື "ດາດາ"
- ☐ ຖອນເອົາສິ່ງຂອງໂດຍການໃຊ້ຄຳເວົ້າ

### 18 ຫາ 1 ປີ ລູກຂອງທ່ານ...

- ☐ ຍ່າງຂຶ້ນ ແລະ ລົງຂັ້ນໃດດ້ວຍຈັບແຂນລາວ
- ☐ ແຕ້ມໄປໂລເລ
- ☐ ຕີງໂຕຂອງລາວໄປຕາມສຽງເພງ
- ☐ ເອົາຄຳເວົ້າສອງຄຳເຂົ້າໃສ່ກັນ ("ນ້ຳຕື່ມ")
- ☐ ເລີ້ມຕົ້ນຖາມຄຳຖາມ, ("ນ້ຳງູສ?", "ບາຍບາຍ?")
- ☐ ປ້ອນຕົນເອງດ້ວຍແຊນວິຊ໌, ກັດກິນ
- ☐ ປົດຖົງເທົ້າ ແລະ ເກີບອອກ
- ☐ ເບິ່ງຮູບໃນປຶ້ມນິທານນຳຜູ້ໃຫຍ່
- ☐ ຕັດສິນໃຈງ່າຍໆນຳເຄື່ອງຫລິ້ນ (ພັສໂຊ ຫລື ຣົດຫຣັກ)
- ☐ ຮຽນແບບການຫລິ້ນຂອງເດັກຄົນອື່ນ (ຖອກດິນຊາຍ, ແກວ່ງຫມາກບານ)

### 2 ຫາ 3 ປີ ລູກຂອງທ່ານ...

- ☐ ຍ່າງໄດ້ດີ, ແລ່ນ, ຢຸດ, ຂຶ້ນຂັ້ນໃດ, ແລະ ນັ່ງຢ່ອງຢໍ້
- ☐ ຢອງກັນຂຶ້ນຫລາຍກວ່າສອງຢ່າງ
- ☐ ໃຊ້ບ່ວງ ແລະ ຈອກໂດຍຕົນເອງ
- ☐ ເຮັດຕາມຄຳຊີ້ນຳສອງຂັ້ນຕອນ ("ໄປເອົາປຶ້ມ ແລະ ປະໃສ່ໂຕະໄວ້")
- ☐ ເວົ້າຊື່ຂອງຕົນໂຕຂອງລາວເອງຫ້າຫາຫົກຢ່າງ
- ☐ ມີສ່ວນນຳການເວົ້າລົມກັນງ່າຍໆ
- ☐ ຕອບຄຳຖາມງ່າຍໆ "ແມ່ນຫຍັງ" ແລະ "ເຮັດຫຍັງ" ("ເຈົ້າຢາກກິນຫຍັງສຳລັບອາຫານທ່ຽງ?")
- ☐ ຊີ້ໃສ່ຫລືບອກຊື່ສິ່ງຂອງເມື່ອຖືກບອກການໃຊ້ມັນ ("ເຈົ້າກິນນ້ຳນຳຫຍັງ?")
- ☐ ຊ່ວຍນຳວຽກງ່າຍໆ (ເກັບເອົາເຄື່ອງຫລິ້ນ)
- ☐ ໃຊ້ຄຳເວົ້າ2-3ປະໂຍກເປັນປະຈຳ ("ຢາກໄດ້ຕື່ມ")



"ລູກຂອງຂ້າພະເຈົ້າດີຂຶ້ນກວ່າເກົ່າດ້ວຍຄວາມຊ່ວຍເຫລືອທັງຫມົດແລະຂ້າພະເຈົ້າສາມາດຮຽນຮູ້ນຳລາວ."

ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບການຈະເຣີນເຕີບໂຕຂອງລູກຂອງທານ...

**ກະຣຸນາ ສອບຖາມ**

ເດັກນ້ອຍບໍ່ສາມາດລໍຖ້າໄດ້.